Research Report
ສະບັບທີ. 43

ທະນາຄານພົງສະຫວັນ Phongsavanh BANK
WWW.PHONGSAVANHBANK.COM
ໜ່ວຍ 01, ຖະໜົນ ໄກສອນພົມວິຫານ, ບ້ານ ພະຂາວ, ເມືອງ ໄຊທານີ, ນະຄອນຫຼວງວຽງຈັນ, ສປປ ລາວ ໂທ: (+856 21) 716 024 ອີເມວ: hq.trade.finance.group@phongsavanhbank.com

# ລາຍງານເສດຖະກິດການເງິນປະຈຳອາທິດ

(28-ພຶດສະພາ-2018)

## ຕະຫຼາດຫຼັກຊັບອະເມລິກາ | ຕະຫຼາດຫຼັກຊັບເອີຣົບ | ຕະຫຼາດຫຼັກຊັບອາຊີ

| ດັດສະນີ | ລາຄາ | ການເໜັງຕີງ | ປ່ຽນແປງ. % | ດັດສະນີ | ລາຄາ | ການເໜັງຕີງ | ປ່ຽນແປງ. % | ດັດສະນີ | ລາຄາ | ການເໜັງຕີງ | ປ່ຽນແປງ. % |
|---|---|---|---|---|---|---|---|---|---|---|---|
| Dow | 24,753.09 | 38.00 | +0.15% | CAC 40 | 5,542.55 | -71.96 | -1.28% | FTSE STI | 3,513.23 | -16.04 | -0.45% |
| Nasdaq | 7,433.85 | 79.51 | +1.08% | DAX | 12,938.01 | -139.71 | -1.07% | Hang Seng | 30,588.04 | -459.87 | -1.48% |
| NYSE | 12,634.94 | -82.48 | -0.65% | FTSE 100 | 7,730.28 | -48.51 | -0.62% | Nikkei | 22,450.79 | -479.57 | -2.09% |
| S&P 500 | 2,721.33 | 8.36 | +0.31% | | | | | SET | 1,741.21 | -12.96 | -0.74% |

ແຫຼ່ງຂໍ້ມູນ:: ທອມຊັນລອຍເຕີ, 25-ພຶດສະພາ-2018.

## ສິນຄ້າ & ຮຸ້ນ

| ດັດສະນີ | ລາຄາ | ການເໜັງຕີງ | ປ່ຽນແປງ. % |
|---|---|---|---|
| ຄຳ | 1,301.60 | 8.46 | +0.65% |
| ນ້ຳມັນ | 67.48 | -3.80 | -5.33% |

ແຫຼ່ງຂໍ້ມູນ:: ທອມຊັນລອຍເຕີ, 25-ພຶດສະພາ-2018.

**ຕະຫຼາດຫຼັກຊັບ** – ການມີມູນຄ່າເພີ່ມຂຶ້ນຫຼາຍກວ່າຮຸ້ນຂະແໜງການອື່ນຂອງຮຸ້ນກຸ່ມອິນເຕີເນັດ ແລະ ເຕັກໂນໂລຊີໄດ້ເຮັດໃຫ້ດັດສນີຫຼັກທັງສາມຕົວຂອງອະເມລິກາມີມູນຄ່າເພີ່ມຂຶ້ນໃນຮອບອາທິດ. ຮຸ້ນບໍລິສັດ ໂຕໂຢຕາ, ຮອນດາ, ເກຍ ແລະ ຮຸ້ນໄດແມ່ນບັນດາຮຸ້ນທີ່ມີມູນຄ່າຫຼຸດລົງຫຼາຍສຸດສືບເນື່ອງມາຈາກການປັບເພີ່ມອັດຕາພາສີນຳເຂົ້າລົດໃຫຍ່ຂອງອະເມລິກາຂຶ້ນເປັນ 25%.

**ນ້ຳມັນ** – ນ້ຳມັນດິບຫຼຸດລົງຢ່າງໜັກພາຍຫຼັງທີ່ກຸ່ມປະເທດຜູ້ຜະລິດນ້ຳມັນເພື່ອການສົ່ງອອກ ແລະ ລັດເຊຍໄດ້ມີການພິຈາລະນາທີ່ຈະປັບເພີ່ມການຜະລິດນ້ຳມັນເພີ່ມຂຶ້ນ 1 ລ້ານ ບາເລວລ໌ຕໍ່ມື້ເພື່ອທົດແທນການຂາດຫາຍໄປຂອງການສະໜອງຈາກປະເທດອີຣານ ແລະ ເວເນຊູເອລາ ແລະ ການເພີ່ມຂຶ້ນຫຼາຍສຸດໃນຮອບອາທິດຂອງຫົວຂຸດເຈາະນ້ຳມັນດິບໃນອະເມລິກາໄດ້ເຮັດໃຫ້ມີຄວາມເປັນໄປໄດ້ທີ່ຍອດການຜະລິດນ້ຳມັນໄດ້ເພີ່ມຂຶ້ນ.





**ຄຳ** – ລາຄາຄຳໄດ້ຟື້ນຕົວຈາກລະດັບຕ່ຳສຸດໃນຮອບຫ້າເດືອນໃນຊ່ວງຕົ້ນອາທິດມາມີມູນຄ່າເພີ່ມຂຶ້ນໃນຮອບອາທິດໂດຍມີລາຄາສູງກວ່າລະດັບລາຄາສຳຄັນທີ່ $1,300 ຫຼັງຈາກທີ່ໄດ້ຮັບແຮງກົດດັນຈາກການແຂງຄ່າຂອງເງິນໂດລາ. ການເພີ່ມຂຶ້ນຂອງລາຄາໃນຄັ້ງນີ້ໄດ້ຮັບປັດໄຈຫຼັກມາຈາກບົດບັນທຶກການປະຊຸມທະນາຄານກາງອະເມລິກາທີ່ບົ່ງບອກເຖິງການປັບເພີ່ມອັດຕາດອກເບ້ຍໃນລະດັບປົກະຕິ. ໃນຂະນະທີ່ມູນຄ່າຄຳໄດ້ຖືກຄາດການວ່າຈະເພີ່ມຂຶ້ນຕື່ມໃນອາທິດນີ້.

## ເງິນຕາ

| ຄູ່ສະກຸນເງິນ | ອັດຕາ | ປ່ຽນແປງ. % |
|---|---|---|
| ໂດລາອົດສຕາລີ ໂດລາສະຫະລັດ | 0.7548 | +0.47% |
| ປອນອັງກິດ ໂດລາສະຫະລັດ | 1.3296 | -1.32% |
| ຢູໂຣ ໂດລາສະຫະລັດ | 1.1650 | -1.09% |
| ໂດລານິວຊີແລນ ໂດລາສະຫະລັດ | 0.6915 | +0.04% |
| ໂດລາສະຫະລັດ ໂດລາແຄນາດາ | 1.2974 | +0.71% |
| ໂດລາສະຫະລັດ ເຢັນຍີ່ປຸ່ນ | 109.38 | -1.24% |
| ໂດລາສະຫະລັດ ຟຣັ່ງສະວິດ | 0.9905 | -0.73% |
| ໂດລາສະຫະລັດ ໄທບາດ | 31.930 | -0.84% |

ແຫຼ່ງຂໍ້ມູນ:: ທອມຊັນລອຍເຕີ, 25-ພຶດສະພາ-2018.

- ເງິນໂດລາມີມູນຄ່າເພີ່ມຂຶ້ນເມື່ອທຽບກັບສະກຸນເງິນຫຼັກອື່ນ ແລະ ດັດສນີເງິນໂດລາກໍ່ໃກ້ຈະຂຶ້ນເຖິງຈຸດສູງສຸດໃໝ່ໃນປີ 2018 ຫຼັງຈາກມີບັນຫາຄວາມກັງວົນຕໍ່ຄວາມຂັດແຍ່ງທາງການເມືອງໃນພູມມິພາກ ແລະ ຄວາມບໍ່ແນ່ນອນຂອງການພົບປະກັນລະຫວ່າງປະທ່ານາທິບໍດີ ໂດໂນ ທຣັຟ ແລະ ຜູ້ນຳ ເກົາຫຼີເໜືອຊຶ່ງໄດ້ສົ່ງຜົນຢ່າງຫຼາຍໃຫ້ມີການເໜັງຕີງຂອງຄ່າເງິນໂດລາໃນວັນສຸກ.
- ເງິນປອນອ່ອນຄ່າລົງຕ່ຳສຸດໃນຮອບຫ້າເດືອນທຽບເງິນໂດລາຫຼັງຈາກທີ່ຜະລິດຕະພັນລວມພາຍໃນຕ່ຳກວ່າໄຕມາດກ່ອນໜ້າລວມເຖິງຄວາມກັງວົນກ່ຽວກັບການເຈລະຈາການອອກຈາກການເປັນສະມາຊິກສະຫະພາບເອີຣົບຂອງອັງກິດ. ຄວາມບໍ່ແນ່ນອນຂອງສະພາບຕະຫຼາດກ່ຽວກັບຄວາມວຸ້ນວາຍຂອງການເມືອງອີຕາລີໄດ້ສົ່ງຜົນກະທົບຢ່າງໜັກຕໍ່ຄ່າເງິນຢູໂຣ. ແຕ່ເງິນໂດລາກໍ່ອ່ອນຄ່າເມື່ອທຽບກັບສອງສະກຸນເງິນປອດໄພ.
- ເນື່ອງຈາກການບໍ່ມີຂໍ້ພິພາກຕໍ່ອາຊີ ແລະ ບົດບັນທຶກການປະຊຸມທະນາຄານກາງອະເມລິກາທີ່ສົ່ງສັນຍານເຖິງການປັບເພີ່ມອັດຕາດອກເບ້ຍຢ່າງຊ້າໆ, ເງິນບາດໄດ້ມີມູນຄ່າເພີ່ມຂຶ້ນຕາມສະກຸນເງິນໃນພູມມິພາກເມື່ອທຽບກັບໂດລາ.

## ຕົວເລກ ແລະ ເຫດການສຳຄັນທາງເສດຖະກິດ

Upcoming Events

- ໃນອາທິດນີ້ຕະຫຼາດຈະມີການເຄື່ອນໄຫວຢ່າງຊ້າໆເນື່ອງຈາກວ່າເປັນວັນພັກຂອງປະເທດອະເມລິກາ ແລະ ອັງກິດ. ຕົວເລກເສດຖະກິດອະເມລິກາຈະເປັນທີ່ສົນໃຈຂອງຕະຫຼາດ ແລະ ລາຍງານຕົວເລກການຈ້າງງານນອກພາກກະສິກຳຈະເປັນຕົວເລກຫຼັກທີ່ຕ້ອງມີການເຝົ້າຕິດຕາມ.
- ລາຍງານທີ່ສຳຄັນອັນທຳອິດໃນອະເມລິກາກໍ່ຄືລາຍງານລາຍຈ່າຍການຊົມໃຊ້ບຸກຄົນທີ່ຖືກຄາດການວ່າຈະຍັງຄົງມີທ່າແຮງການເຕີບໂຕໃນລະດັບເກົ່າໃນເດືອນເມສາ. ລາຍງານຕົວເລກການຈ້າງງານນອກພາກກະສິກຳຈະເປັນການສະຫຼຸບພາບຕະຫຼາດທັງອາທິດໂດຍມີການຄາດການການເພີ່ມຂຶ້ນຂອງການຈ້າງງານໃໝ່ຈຳເປັນ 185,000 ອັດຕາ ຂະນະທີ່ລາຍຮັບສະເລ່ຍຕໍ່ຊົ່ວໂມງແມ່ນຖືກປະມານການວ່າຈະຄົງທີ່ໃນເດືອນພຶດສະພາ. ຕົວເລກຄ່າຈ້າງງານທີ່ແຂງແຮງຂຶ້ນສາມາດໃຫ້ເຮັດເງິນໂດລາມີມູນຄ່າເພີ່ມຂຶ້ນ ແລະ ຂຶ້ນສູງລະດັບສຳຄັນທີ່ 111 ເຢັນ/ໂດລາໄດ້.
- ຕົວເລກການໃຊ້ຈ່າຍທຶນຂອງໄຕມາດທີ່1ຂອງປະເທດຍີ່ປຸ່ນໃນວັນສຸກອາດຈະເປັນປັດໄຈທີ່ສຳຄັນທີ່ສຸດທີ່ຈະສາມາດສ້າງການເຄື່ອນໄຫວໃນຕະຫຼາດຫາກຜະລິດຕະພັນລວມພາຍໃນທີ່ຝົດຕົວໄຕມາດທີ່1ອາດຈະມີການດັດແກ້.

| ວັນທີ | ເວລາ | ປະເທດ | ລາຍລະອຽດ | ຄັ້ງນີ້ | ຄັ້ງກ່ອນ |
|---|---|---|---|---|---|
| May 29 | 06:30 | JP | ອັດຕາສັດສ່ວນວຽກ/ຜູ້ສະໝັກວຽກ (Apr) | 1.60 | 1.59 |
| May 30 | 07:00 | JP | ການປາໄສຂອງຜູ້ວ່າທະນາຄານກາງຍີ່ປຸ່ນ | | |
| | 14:00 | DE | ດັດສນີລວມລາຄາຜູ້ບໍລິໂພກເບື້ອງຕົ້ນ (YoY) (May) | 1.9% | 1.4% |
| | 19:30 | US | ຜະລິດຕະພັນລວມພາຍໃນເບື້ອງຕົ້ນ (Q1) | 2.4% | 2.3% |
| | 19:30 | US | ລາຍຈ່າຍການຊົມໃຊ້ບຸກຄົນຫຼັກເບື້ອງຕົ້ນ (QoQ) (Q1) | 2.3% | 2.5% |
| May 31 | 24h | EU | ການປະຊຸມກຸ່ມປະເທດ G7 | | |
| | 16:00 | EU | ດັດສນີລາຄາຜູ້ບໍລິໂພກຫຼັກເບື້ອງຕົ້ນ (YoY) (May) | 1.0% | 0.7% |
| | 19:30 | US | ດັດສນີລາຄາລາຍຈ່າຍການຊົມໃຊ້ບຸກຄົນຫຼັກ (YoY) (Apr) | 2.0% | 1.9% |
| | 19:30 | CA | ຜະລິດຕະພັນລວມພາຍໃນເບື້ອງຕົ້ນ (QoQ) (Q1) | 1.7% | 1.7% |
| Jun 01 | 19:30 | US | ການຈ້າງງານນອກພາກກະສິກຳ (May) | 185K | 164K |
| | 19:30 | US | ລາຍຮັບສະເລ່ຍຕໍ່ຊົ່ວໂມງ (YoY) (May) | 2.7% | 2.6% |

## ຕະຫຼາດລາວໂດຍສັງເຂບ

- **ສະກຸນເງິນ**
  - ເງິນກີບ ອ່ອນຄ່າລົງ 17 ກີບ ທຽບເງິນໂດລາທີ່ 8,368 ທຽບອາທິດກ່ອນໜ້າ 8,351
  - ເງິນກີບ ອ່ອນຄ່າລົງ 2.88 ກີບ ທຽບເງິນບາດທີ່ 261.73 ທຽບອາທິດກ່ອນໜ້າ 258.85







ແຫຼ່ງຂໍ້ມູນ: ທະນາຄານ ແຫ່ງ ສປປ ລາວ, 28-ພຶດສະພາ-2018

- **ດອກເບ້ຍເງິນຝາກ**

ທະນາຄານພົງສະຫວັນ Phongsavanh BANK

| | 3M | 6M | 1Y |
|---|---|---|---|
| ກີບ | 3.16% | 3.95% | 5.59% |
| ບາດ | 2.75% | 3.75% | 5.50% |
| ໂດລາ | 3.25% | 4.25% | 5.75% |

ຂໍ້ມູນວັນທີ່: 01-ມິນາ-2018, ທະນາຄານ ພົງສະຫວັນ

- **ຕະຫຼາດຫຼັກຊັບລາວ**

| ດັດສະນີ | ປ່ຽນແປງ. % |
|---|---|
| 927.34 | +0.46% |

ແຫຼ່ງຂໍ້ມູນ: ຕະຫຼາດຫຼັກຊັບລາວ, 25-ພຶດສະພາ-2018

ຄຳປະຕິເສດ: ການສື່ຄວາມດັ່ງກ່າວນີ້ແມ່ນໄດ້ຖືກສ້າງຂຶ້ນສະເພາະບຸກຄົນ ຫຼື ອົງກອນໃດໜຶ່ງທີ່ໄດ້ມີການສື່ຄວາມເຖິງ. ຂໍ້ມູນ ແລະ ຂ່າວຕະຫຼາດທັງໝົດທີ່ປະກົດຢູ່ໃນການສື່ຄວາມສະບັບນີ້ແມ່ນເປັນການສະໜອງສະພາບ ແລະ ຄຳຄິດເຫັນທັດສະນະທາງຕະຫຼາດໂດຍທົ່ວໄປເທົ່ານັ້ນ ແລະ ບໍ່ມີຈຸດປະສົງໃນການຊັກຊວນ ຫຼື ປະກອບເປັນຄຳແນະນຳໃນການລົງທຶນເພື່ອທີ່ຈະຊື້ ຫຼື ຂາຍຜະລິດຕະພັນທາງການເງິນລວມເຖິງຜະລິດຕະພັນທີ່ບໍ່ຜ່ານຕະຫຼາດ. ປະຫວັດຂໍ້ມູນການເຄື່ອນເໜັງຂອງລາຄາໃດໜຶ່ງແມ່ນເປັນພຽງຂໍ້ມູນແລະອ້າງອີງໂດຍອີງໃສ່ຈາກການວິເຄາະຂອງພວກເຮົາ. ພວກເຮົາເຊື່ອວ່າຂໍ້ມູນທີ່ປະກົດໃນການສື່ຄວາມນີ້ແມ່ນມີຄວາມໜ້າເຊື່ອຖື, ແຕ່ບໍ່ໄດ້ມີການຮັບປະກັນໃດໆກ່ຽວກັບຄວາມຖືກຕ້ອງ ແລະ ຄວາມຄົບຖ້ວນສົມບູນ.